ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ເລກທີ 0474/ທລຍ

ນະຄອນຫລວງວຽງຈັນ, ວັນທີ 20 ກໍລະກົດ 2022

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ການຈັດຊື້ລົດຈັກ, ຈຳນວນ 80 ຄັນ

ສັນຍາສະບັບເລກທີ: PRF.III-AF/Motorbike/G-S/2022 (AF-G.028)

ເຖິງ: ຫ້ອງການ ກອງທຶນຫລຸດຜ່ອນຄວາມທຸກຍາກ

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ III - ໄລຍະທຶນເພີ່ມ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງເຂົ້າໃນການຈັດຊື້ລົດຈັກ, ຈຳນວນ 80 ຄັນ, ດ້ວຍການປະມູນແບບສົມທຽບລາຄາ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນຮ້ານ/ບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສຳລັບການຈັດຊື້ເຄື່ອງທີ່ໄດ້ລະບຸໄວ້ຂ້າງເທິງ, ໄລຍະເວລາໃນການສົ່ງມອບ ແມ່ນ 60 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງສະເໜີລາຄາ ຕ້ອງສົ່ງກ່ອນເວລາ 13:00 ໂມງ ຂອງວັນທີ 15 ສິງຫາ 2022 ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 13:00 ໂມງ, ວັນທີ 15 ສິງຫາ 2022 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ. ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນ ສີສະຫວາດ, ບ້ານ ນາໄຮ່ດ່ຽວ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105) ໜ່ວຍງານຈັດຊື້.

ກອງທຶນຫລຸດຜ່ອນຄວາມທຸກຍາກ,

ຜູ້ອຳນວຍການບໍລິຫານ

ກະຊວງກະສິກຳ ແລະ ປ່າໄມ້ ກອງທຶນຫລຸດຜ່ອນຄວາມທຸກຍາກ

ພັດນະຄອນ ຄັນທະມີໄຊ